# ຊາກາລີ (ຊາກາຣີຢາ)

## ຜູ້ເຫັນນິມິດ

| | |
|---|---|
| ໃຈຄວາມສໍາຄັນ | ສໍາເຣັດແລ້ວ |
| ຂໍ້ຄວາມສໍາຄັນ | ໔:໖ |
| ຈໍານວນບົດ | ໑໔ ບົດ |
| ເຣື່ອງເກີດຂຶ້ນແຕ່ປີ | ໔໘໐ ຈົນເຖິງ ໔໐໐ ກ່ອນ ຄ.ສ. |
| ປະຈໍາຢູ່ທີ່ | ເມືອງເຢຣູຊາເລັມ |
| ຈັກກະພັດທີ່ມີອໍານາດ | ເປເຣເຊ |
| ຊາກາລີແປວ່າ | ພຣະເຢໂຮວາຊົງຣະນຶກຄິດເຖິງ |
| ຜູ້ທໍານວາຍຄົນທີ | ໑໕ |
| ເຊີນເບິ່ງໜັງສື | ອາເກ ແລະເອເຊດເຣເຊ |

### ໑. ວ່າດ້ວຍປວັດແລະຄາວສໄນຂອງຊາກາລີ

ຊາກາລີໄດ້ ທໍານວາຍໃນຄາວດຽວກັນກັບອາເກ ແລະ ໄດ້ເປັນໝູ່ກັນ ໜັງສືອາກເກໄດ້ເທສນາຊັກຊວນໃຫ້ຄົນທັງຫລາຍເຣັດການພຣະເຈົ້າ ແລະສ້າງວິຫານ ສ່ວນຊາກາລີໄດ້ສແດງຄວາມເຫັນແລະຄວາມຄິດຂອງພຣະເຈົ້າທາງນິມິດ ຊາກາລີເປັນປະໂລຫິດເກີດທີ່ເມືອງບາບີໂລນ ຄາວພວກຢູດາຕົກເປັນທາດຢູ່ທີ່ນັ້ນ

## ໖. ວ່າດ້ວຍເນື້ອຄວາມ

໑. ດ້ວຍຄຳເອີ້ນແລະດ້ວຍນິມິດ ຊາກາລີຈຶ່ງໄດ້ຕັກເຕືນພວກຢູດາໃຫ້ປະໃຈເກົ່າເອົາໃຈໃໝ່ແລະໃຫ້ຕັ້ງໃຈສ້າງວິຫານ

໒. ຊາກາລີສັງເກດເຫັນວ່າພວກຢູດາຖືກຄັດເລືອກເພື່ອໃຫ້ເປັນປະໂຍດແກ່ສາກົນໂລກດັ່ງນັ້ນເພິ່ນຈຶ່ງປະກາດວ່າ. ເມຊີອາຈະສະເດັດມາຊຳຮະລ້າງພວກຂອງພຣະອົງ ແລະຕັ້ງໃຫ້ພວກເຂົາເປັນເຄື່ອງໃຊ້ຂອງພຣະອົງ ແລະພຣະອົງຈະຊົງຕັ້ງພຣະຣາຊະອານາຈັກຂອງພຣະອົງໄວ້ໃນແຜ່ນດິນໂລກ

໓. ຊາກາລີ ຍັງ ໄດ້ ທຳນວາຍຢ່າງແຈ່ມແຈ້ງ ກ່ຽວກັບ ຄວາມລຳບາກແລະພຣະສງ່າຣາສີຂອງເມຊີອາ ເມື່ອຈະສເດັດມາຄັ້ງທີ ໑ ແລະຄັ້ງທີ ໒ ຄືພວກຢູດາໄດ້ເຫັນຜູ້ທີ່ເຂົາໄດ້ແທງນັ້ນ (໑໒:໑໐)

## ໗. ວ່າດ້ວຍສະພາບ ຂອງພຣະຄຣິດຕາມໜັງສືຊາກາລີ

໑. ເປັນທູດຂອງພຣະເຢໂຮວາ (໑:໑໑;໓:໑-໕;໑໒:໘)

໒. ເປັນຂ້າໃຊ້ (໓:໘)

໓. ເປັນຜູ້ສູງສຸດ (໓:໘; ໖:໑໒)

໔. ເປັນຫີນອັນສຳຄັນ ບົດ ໔:໗;໓:໙

໕. ເປັນປະໂລຫິດໃຫຍ່ ບົດ ໖:໑໑-໑໓

໖. ເປັນກະສັດແຫ່ງສັນຕິສຸກ ບົດ ໙:໙-໑໐;໑໔:໙

໗. ເປັນຜູ້ລ້ຽງແກະທີ່ຖືກຂາຍ ບົດ ໑໑:໗–໑໔ ແລະຖືກບາດ ໑໓:໗

໘. ເປັນບຸດຂອງກະສັດດາວິດ ບົດ ໑໒:໘

໙. ເປັນຜູ້ຖືກແທງແລ້ວ ບົດ ໑໒:໑໐

໑໐. ເປັນພຣະເຢໂຮວາຜູ້ໄຊຊນະ ບົດ ໑໔:໓–໔,໙,໑໖

## ໔. ການແບ່ງເປັນພາກ

### ພາກທີ ໑ ວ່າດ້ວຍພວກທີ່ຂັດເລືອກໄວ້ແລະເຣືອງວິຫານ ບົດ ໑–໘

ກ. ຄຳເອີ້ນໃຫ້ຫລັບມາຫາພຣະເຈົ້າ ບົດ ໑:໑–໖

ຂ. ນິມິດທັງ ໘ ຂອງຊາກາລີ ບົດ ໑:໗–໖:໘

ຄ. ເຫດການຊຶ່ງມີຄວາມໝາຍເຖິງພຣະເຢຊູ ບົດ ໖:໙–໑໕

ງ. ຄຳເທສນາກ່ຽວກັບການຖືສິນອົດອາຫານ ບົດ ໗–໘

### ພາກທີ ໒ ວ່າດ້ວຍເຫດການທີ່ຈະບັງເກີດຂຶ້ນກ່ອນພຣະເຈົ້າຊົງຕັ້ງພຣະຣາຊອານາຈັກເທິງໂລກນີ້ ບົດ ໙–໑໔

ກ. ພຣະເຈົ້າຈະຊົງໂຜດຊາວເມືອງເຢຣູຊາເລັມໃຫ້ພົ້ນຈາກຊາວຕ່າງປະເທດ ບົດ ໙–໑໐

ຂ. ການປະຖິ້ມຜູ້ລ້ຽງແກະ ບົດ ໑໑

ຄ. ພຣະເຈົ້າ ຈະຊ່ອຍ ຊາວ ເມືອງ ເຢຣູຊາເລັມ ແລະ ຊາວ
ເມືອງເຢຣູຊາເລັມຈະກັບໃຈເລັຍໃໝ່ ບົດ ໑໘–໑໙

ງ. ພຣະເຢຊູຈະສເດັດມາຄັ້ງທີສອງ ແລະ ຈະຕັ້ງພຣະຣາຊ
ອານາຈັກຂອງພຣະອົງເທິງແຜ່ນດິນໂລກ ບົດ ໑໔